**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1761/ອຄ

ນະຄອນຫຼວງວຽງຈັນ, ວັນທີ 30 ພະຈິກ 2022

# <u>ແຈ້ງການ</u>

**ເຖິງ:** ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.
**ເລື່ອງ:** ແຈ້ງປັບລົງລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 168/ຄປຈ, ລົງວັນທີ 06 ມິຖຸນາ 2022.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ອີງຕາມ ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 631/ຫສນຍ, ລົງວັນທີ 09 ພຶດສະພາ 2022.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 148/ຫສນຍ, ລົງວັນທີ 22 ພະຈິກ 2022;
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງ ລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານ້ຳມັນເຊື້ອໄຟ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ ກໍເພື່ອຮັບປະກັນການສະໜອງນ້ຳມັນເຊື້ອໄຟ ໃຫ້ເປັນປົກກະຕິ.

**ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງໄດ້ອອກແຈ້ງການ ເຖິງ ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ຊາບ ແລະ ປະຕິບັດ ດັ່ງນີ້:**

1. ປັບລົງລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ທຸກຊະນິດ ຄື: ນ້ຳມັນແອັດຊັງພິເສດ ປັບລົງ 1.210 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ ປັບລົງ 810 ກີບ/ລິດ ແລະ ນ້ຳມັນກາຊວນ ປັບລົງ 550 ກີບ/ລິດ, ຊຶ່ງລາຄາດັ່ງກ່າວແມ່ນປະຕິບັດຢູ່ຈຸດນະຄອນຫຼວງວຽງຈັນ, ບາງເຂດຂອງແຂວງວຽງຈັນ (ເຂດເທດສະບານແຂວງ, ເມືອງວຽງຄຳ, ເມືອງທຸລະຄົມ, ເມືອງແກ້ວອຸດົມ, ເມືອງໂພນໂຮງ, ແສນຊຸມ), ແຂວງຊຽງຂວາງ (ເຂດເທດສະບານແຂວງ), ບາງເຂດແຂວງບໍ່ແກ້ວ (ເຂດເທດສະບານແຂວງ, ເຂດບ້ານປຸງ, ເຂດບ້ານດ່ານ, ເຂດນ້ຳຍຸງ, ເຂດນ້ຳເກີງ ແລະ ເຂດນ້ຳປຸກ), ບາງເຂດແຂວງໄຊຍະບູລີ (ເມືອງແກ່ນທ້າວ, ເມືອງເງິນ ແລະ ເມືອງຄອບ), ບາງເຂດແຂວງຄຳມ່ວນ (ເທດສະບານແຂວງ, ເຂດໜອງບົກ ແລະ ເຂດປາກນ້ຳ), ບາງເຂດແຂວງສະຫວັນນະເຂດ (ເທດສະບານແຂວງ, ດານີ 1, ເຊໂນ ແລະ ຫຼັກ 35) ແລະ ບາງເຂດແຂວງຈຳປາສັກ (ເທດສະບານນະຄອນປາກເຊ, ໂພນທອງ, ຊະນະສົມບູນ, ບາຈຽງຈະເລີນສຸກ, ປະທຸມພອນ, ຈຳປາສັກ). ສ່ວນຈຸດຈຳໜ່າຍນ້ຳມັນເຊື້ອໄຟອື່ນໆ ຈະມີການເໜັງຕີງແຕກຕ່າງກັນ ເນື່ອງຈາກມີການປັບຄ່າຂົນສົ່ງນ້ຳມັນເຊື້ອໄຟ ພາຍໃນປະເທດ ຈາກ 1 ກີບ/ລິດ/ກິໂລແມັດ ຂຶ້ນເປັນ 1.5 ກີບ/ລິດ/ກິໂລແມັດ ຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 148/ຫສນຍ, ລົງວັນທີ 22 ພະຈິກ 2022 (ກຳນົດໃນແຈ້ງການຕ່າງຫາກ).

ລາຄາຕາມຕາຕະລາງລຸ່ມນີ້ ແມ່ນຈຸດນະຄອນຫຼວງວຽງຈັນ:

ຫົວໜ່ວຍ:ລິດ.

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ປະຈຸບັນ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ອຊ ພິເສດ | 26.190 | 24.980 | -1.210 | 4.62 | |
| 2 | ອຊ ທຳມະດາ | 20.730 | 19.920 | -810 | 3.91 | |
| 3 | ກາຊວນ | 19.650 | 19.100 | -550 | 2.80 | |

(ສຳລັບລາຄາຂາຍຍ່ອຍໃນເຂດເທດສະບານແຂວງ ແມ່ນມີເອກະສານຊ້ອນທ້າຍ).

2. ລາຄາໃໝ່ນີ້ ແມ່ນໃຫ້ເລີ່ມປະຕິບັດວັນທີ 01 ທັນວາ 2022, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
3. ການຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 1138/ກຄພນ, ລົງວັນທີ 30 ພະຈິກ 2022 ຈົນກວ່າຈະມີການປ່ຽນແປງ.
4. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນໃຫ້ບໍລິການຢ່າງເປັນປົກກະຕິ.
5. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 1707/ອຄ, ລົງວັນທີ 23 ພະຈິກ 2022.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

**ເຊັນແທນລັດຖະມົນຕີ**

**ຮອງລັດຖະມົນຕີ**

ບຸນເຖິງ ດວງສະຫວັນ

**ບ່ອນສົ່ງ:**

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ເລກທີ: 1138/ກຄພນ
ນະຄອນຫຼວງວຽງຈັນ, ວັນທີ: 30 ພະຈິກ 2022

__ໂຄງສ້າງລາຄານ້ຳມັນເຊື້ອໄຟ__

ຫົວໜ່ວຍ: ກີບ/ລິດ.

| ຫ້ອງ | | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 | 13 | 14 | 15 | 16 | 17 | 18 | 19 | 20 | 21 | 22 | 23 | 24 | 25 |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ບໍລິສັດ ນຳເຂົ້າ ແລະ ສົ່ງອອກ | | | | | | | | | | | | | ບໍລິສັດ ຈຳໜ່າຍພາຍໃນ | | | | | ປ້ຳນ້ຳມັນເຊື້ອໄຟ | | | | | | |
| ແຂວງ | ຊະນິດ | ລາຄາ CIF ຄິດໄລ່ພາສີ ໂດລາສະຫະລັດ | ລາຄາ CIF ຄິດໄລ່ພາສີ ກີບ | ພາສີ ຂາເຂົ້າ | ອາກອນ ຂາເຂົ້າ | ກທທ ທາງ | ຖັງແຮ | ລວມ ຕົ້ນທຶນ | ອມພ ສົ້ນເຂົ້າ | ຄ່າບໍລິການ | ບໍ່ລວມ ອມພ | ອມພ 7% | ລວມ ອມພ | ອມພ ມອບຕື່ມ | ຄ່າ ບໍລິການ | ບໍ່ລວມ ອມພ | ອມພ 7% | ລວມ ອມພ | ອມພ ມອບຕື່ມ | ຄ່າ ບໍລິການ | ບໍ່ລວມ ອມພ | ອມພ 7% | ປະຈຸບັນ | ລວມ ອມພ (ຂະເໜີ) | ອມພ ມອບຕື່ມ | ເພີ່ມ/ ຫຼຸດ |
| ນ.ວ | ອ/ຊ ພິເສດ | $ 0.6612 | 11,480 | 2,296 | 5,511 | 520 | 1,080 | 20,887 | 1,350 | 1,200 | 22,087 | 1,546 | 23,633 | 196 | 600 | 22,687 | 1,588 | 24,280 | 42 | 650 | 23,337 | 1,634 | **26,190** | **24,980** | 46 | (1,210) |
| | ອ/ຊ ທຳມະດາ | $ 0.6292 | 10,925 | 1,639 | 628 | 520 | 2,300 | 16,012 | 923 | 1,300 | 17,312 | 1,212 | 18,524 | 288 | 650 | 17,962 | 1,257 | 19,220 | 46 | 650 | 18,612 | 1,303 | **20,730** | **19,920** | 46 | (810) |
| | ກາຊວນ | $ 0.7941 | 13,788 | 689 | - | 520 | 800 | 15,797 | 1,013 | 900 | 16,697 | 1,169 | 17,866 | 155 | 500 | 17,197 | 1,204 | 18,400 | 35 | 650 | 17,847 | 1,249 | **19,650** | **19,100** | 46 | (550) |
| ຄຳມ່ວນ | ອ/ຊ ພິເສດ | $ 0.6622 | 11,498 | 2,300 | 5,519 | 520 | 1,080 | 20,916 | 1,352 | 1,200 | 22,116 | 1,548 | 23,664 | 196 | 600 | 22,716 | 1,590 | 24,310 | 42 | 650 | 23,366 | 1,636 | **26,220** | **25,010** | 46 | (1,210) |
| | ອ/ຊ ທຳມະດາ | $ 0.6306 | 10,949 | 1,642 | 630 | 520 | 2,300 | 16,041 | 925 | 1,300 | 17,341 | 1,214 | 18,554 | 288 | 650 | 17,991 | 1,259 | 19,250 | 46 | 650 | 18,641 | 1,305 | **20,760** | **19,950** | 46 | (810) |
| | ກາຊວນ | $ 0.7956 | 13,814 | 691 | - | 520 | 800 | 15,825 | 1,015 | 900 | 16,725 | 1,171 | 17,896 | 155 | 500 | 17,225 | 1,206 | 18,430 | 35 | 650 | 17,875 | 1,251 | **19,680** | **19,130** | 46 | (550) |
| ສະຫວັນ | ອ/ຊ ພິເສດ | $ 0.6622 | 11,498 | 2,300 | 5,519 | 520 | 1,080 | 20,916 | 1,352 | 1,200 | 22,116 | 1,548 | 23,664 | 196 | 600 | 22,716 | 1,590 | 24,310 | 42 | 650 | 23,366 | 1,636 | **26,220** | **25,010** | 46 | (1,210) |
| | ອ/ຊ ທຳມະດາ | $ 0.6306 | 10,949 | 1,642 | 630 | 520 | 2,300 | 16,041 | 925 | 1,300 | 17,341 | 1,214 | 18,554 | 288 | 650 | 17,991 | 1,259 | 19,250 | 46 | 650 | 18,641 | 1,305 | **20,760** | **19,950** | 46 | (810) |
| | ກາຊວນ | $ 0.7956 | 13,814 | 691 | - | 520 | 800 | 15,825 | 1,015 | 900 | 16,725 | 1,171 | 17,896 | 155 | 500 | 17,225 | 1,206 | 18,430 | 35 | 650 | 17,875 | 1,251 | **19,680** | **19,130** | 46 | (550) |
| ຈຳປາສັກ | ອ/ຊ ພິເສດ | $ 0.6632 | 11,514 | 2,303 | 5,527 | 520 | 1,080 | 20,944 | 1,354 | 1,200 | 22,144 | 1,550 | 23,694 | 196 | 600 | 22,744 | 1,592 | 24,340 | 42 | 650 | 23,394 | 1,638 | **26,250** | **25,040** | 46 | (1,210) |
| | ອ/ຊ ທຳມະດາ | $ 0.6320 | 10,973 | 1,646 | 631 | 520 | 2,300 | 16,070 | 928 | 1,300 | 17,370 | 1,216 | 18,586 | 288 | 650 | 18,020 | 1,261 | 19,280 | 46 | 650 | 18,670 | 1,307 | **20,790** | **19,980** | 46 | (810) |
| | ກາຊວນ | $ 0.7972 | 13,842 | 692 | - | 520 | 800 | 15,854 | 1,017 | 900 | 16,754 | 1,173 | 17,927 | 155 | 500 | 17,254 | 1,208 | 18,460 | 35 | 650 | 17,904 | 1,253 | **19,710** | **19,160** | 46 | (550) |
| ບໍ່ແກ້ວ | ອ/ຊ ພິເສດ | $ 0.6644 | 11,536 | 2,307 | 5,537 | 520 | 1,080 | 20,980 | 1,357 | 1,200 | 22,180 | 1,553 | 23,733 | 196 | 600 | 22,780 | 1,595 | 24,380 | 42 | 650 | 23,430 | 1,640 | **26,290** | **25,080** | 46 | (1,210) |
| | ອ/ຊ ທຳມະດາ | $ 0.6338 | 11,005 | 1,651 | 633 | 520 | 2,300 | 16,108 | 930 | 1,300 | 17,408 | 1,219 | 18,627 | 288 | 650 | 18,058 | 1,264 | 19,320 | 46 | 650 | 18,708 | 1,310 | **20,830** | **20,020** | 46 | (810) |
| | ກາຊວນ | $ 0.7992 | 13,877 | 694 | - | 520 | 800 | 15,890 | 1,020 | 900 | 16,790 | 1,175 | 17,966 | 155 | 500 | 17,290 | 1,210 | 18,500 | 35 | 650 | 17,940 | 1,256 | **19,750** | **19,200** | 46 | (550) |
| ຊຽງຂວາງ | ອ/ຊ ພິເສດ | $ 0.6673 | 11,586 | 2,317 | 5,561 | 520 | 1,080 | 21,065 | 1,363 | 1,200 | 22,265 | 1,559 | 23,824 | 196 | 600 | 22,865 | 1,601 | 24,470 | 42 | 650 | 23,515 | 1,646 | **26,380** | **25,170** | 46 | (1,210) |
| | ອ/ຊ ທຳມະດາ | $ 0.6378 | 11,074 | 1,661 | 637 | 520 | 2,300 | 16,192 | 936 | 1,300 | 17,492 | 1,224 | 18,716 | 288 | 650 | 18,142 | 1,270 | 19,410 | 46 | 650 | 18,792 | 1,315 | **20,920** | **20,110** | 46 | (810) |
| | ກາຊວນ | $ 0.8039 | 13,958 | 698 | - | 520 | 800 | 15,976 | 1,026 | 900 | 16,876 | 1,181 | 18,057 | 155 | 500 | 17,376 | 1,216 | 18,590 | 35 | 650 | 18,026 | 1,262 | **19,840** | **19,290** | 46 | (550) |
| ໄຊຍະບູລີ | ອ/ຊ ພິເສດ | $ 0.6644 | 11,536 | 2,307 | 5,537 | 520 | 1,080 | 20,980 | 1,357 | 1,200 | 22,180 | 1,553 | 23,733 | 196 | 600 | 22,780 | 1,595 | 24,380 | 42 | 650 | 23,430 | 1,640 | **26,290** | **25,080** | 46 | (1,210) |
| | ອ/ຊ ທຳມະດາ | $ 0.6338 | 11,005 | 1,651 | 633 | 520 | 2,300 | 16,108 | 930 | 1,300 | 17,408 | 1,219 | 18,627 | 288 | 650 | 18,058 | 1,264 | 19,320 | 46 | 650 | 18,708 | 1,310 | **20,830** | **20,020** | 46 | (810) |
| | ກາຊວນ | $ 0.7992 | 13,877 | 694 | - | 520 | 800 | 15,890 | 1,020 | 900 | 16,790 | 1,175 | 17,966 | 155 | 500 | 17,290 | 1,210 | 18,500 | 35 | 650 | 17,940 | 1,256 | **19,750** | **19,200** | 46 | (550) |

__ໝາຍເຫດ__ : ອັດຕາແລກປ່ຽນ ທ/ຄ ການຄ້າຕ່າງປະເທດລາວ ມະຫາຊົນ ມື້ຄິດໄລ່ໂຄງສ້າງ ຄັ້ງວັນທີ 30/11/2022 = 17,363 ກີບ/ໂດລາສະຫະລັດ

| | ອ/ຊ ພິເສດ | ອ/ຊ ທຳມະດາ | ກາຊວນ |
|---|---|---|---|
| ພາສີ | 20% | 15% | 5% |
| ອາກອນ | 40% | 5% | 0% |
| ອມພ | 7% | 7% | 7% |

ຫົວໜ້າກົມ

ຜ/ທ. (signature)

ກະຊວງອຸດສາຫະກຳ ແລະ ການຄ້າ — ກົມການຄ້າພາຍໃນ

ພູວຽງ ພົງສາ